**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

# ຂໍ້ແນະນຳ
# ເຕັກນິກການປູກໝາກຖົ່ວຂົ້ວ



ເອກະສານ ປະກອບການຝຶກອົບຮົມ 08:

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳ ແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂຶ້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເໜີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງໝາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



22. ເຕັກນິກການປຸງແຕ່ງອາຫານຈາກສັດນ້ຳ
23. ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນຳໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນຳໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນ້ຳແກ່ເຂົ້າ
12. ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

# ປື້ມຄູ່ມືໃນແຕ່ລະເລື້ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບູອກໂຄລີ
3. ເຕັກນິກການປູກຜັກກະລໍ່າປີ
4. ເຕັກນິກການປູກຜັກກະລໍ່າດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດຫົວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຢອກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໜູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຊີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວຫົວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 08 :
# ແນະນຳເຕັກນິກການປູກໝາກຖົ່ວຂື້ວ

## ສາລະບານ

ຖົ່ວຂື້ວ (Common Bean)....2
ລັກສະນະທົ່ວໄປ .... 2
ພັນທີ່ໃຊ້ປູກ ....3
ການກຽມໝານກ້າ....3
ການປູກ ....3
ການບົວລະບັດຮັກສາ ....4
ການເກັບກ່ຽວ ....5

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003

## ການເກັບກ່ຽວ

ຖ້າເປັນພັນດໍ ອາຍຸການເກັບກ່ຽວປະມານ 50 ຫາ 60 ວັນ. ແຕ່ຖ້າເປັນພັນງັນ ອາຍຸເກັບກ່ຽວປະມານ 70 ຫາ 80 ວັນ (ນັບວັນຈາກຢອດເມັດ). ຄວນເກັບກ່ຽວເລື້ອຍໆ ບໍ່ຄວນປ່ອຍໃຫ້ຝັກແກ່ເພາະຈະເຮັດໃຫ້ເສຍຄຸນນະພາບ. ການເກັບຄວນໃຊ້ມີດຕັດບໍລິເວນຂ້ວນຝັກຢ່າໃຊ້ວິທີດຶງຈະເຮັດໃຫ້ຕົ້ນຄອນໄດ້ຮັບຄວາມເສຍຫາຍ.



# ຂໍ້ແນະນຳເຕັກນິກການປູກໝາກຖົ່ວຂຶ້ວ



## ຖົ່ວຂຶ້ວ (Common Bean)

ຖົ່ວຂຶ້ວ ເປັນພືດຜັກທີ່ນິຍົມບໍລິໂພກຫຼາຍ ມີລົດຊາດແຊບນົວດີສາມາດນຳມາປະກອບອາຫານໄດ້ຫຼາຍຢ່າງ. ຖົ່ວສະນິດນີ້ມີຖິ່ນກຳເນີດຢູ່ໃນທະວີບອາເມລິກາໃຕ້ ສຳຫຼັບບ້ານເຮົາກໍມີການແຜ່ຂະຫຍາຍຫຼາຍພໍສົມຄວນ.

## ລັກສະນະທົ່ວໄປ

ຖົ່ວຂຶ້ວເປັນພືດໃນຕະກຸນ Leguminoseae ມີຊື່ທາງວິທະຍາສາດວ່າ Phaseolus vulgaris Linn. Var. vulgans ເປັນພືດທີ່ທົນທານຕໍ່ຄວາມແຫ້ງແລ້ງໄດ້ດີຖົ່ວຂຶ້ວເປັນພືດທີ່ຈະເລີນເຕີບໂຕໄດ້ງ່າຍ ສາມາດເກີດໃນດິນເກືອບທຸກປະເພດ.

# ແນວພັນທີ່ໃຊ້ປູກ

ພັນທີ່ໃຊ້ປູກມີ 2 ປະເພດຄື: ພັນຝຸ່ມ ແລະພັນເລືອ. ສຳລັບພັນພູ່ມ ມີຄວາມສູງ ປະມານ 30 ຫາ 50 ຊຕມ. ສ່ວນພັນເລືອມີຄວາມສູງເຖິງ 1.80 ມ. ຊຶ່ງຖ້າປູກພັນເລືອ ຄວນຈະຕ້ອງເຮັດຄ້າງ ໃຫ້ເລືອຄືກັບຖົ່ວຝັກຍາວ.

# ການຕຽມໝານປູກ

ເນື່ອງຈາກຖົ່ວຂົ້ວມີຮາກເລິກປານກາງ ການຕຽມດິນຄວນຂຸດ ໄຖເລິກປະມານ 20 ຫາ 25 ຊຕມ. ແລ້ວຕາກດິນໃຫ້ແຫ້ງ 5 ຫາ 7 ວັນ ຖ້າເປັນ ດິນທີ່ຊາຍແກມຕົມຜຸຜຸ່ຍດີຄວນໃສ່ຝຸ່ນບົ່ມ ຫຼືຝຸ່ນຄອກພຽງເລັກ ນ້ອຍແລ້ວ ພວນດິນໃຫ້ລະອຽດ.

# ວິທີປູກ

ໄລຍະປູກທີ່ເໝາະສົມ: ພັນຝຸ່ມລະຫວ່າງຕົ້ນ 10 ຊຕມ. ລະຫວ່າງ ແຖວ 60 ຊຕມ. ພັນເຄືອ ໃຊ້ໄລຍະຫ່າງລະຫວ່າງຕົ້ນ 15 ຊຕມ. ແລະລະ ຫວ່າງແຖວ 100 ຊຕມ. ຫຼັງຈາກຕຽມດິນຮຽບຮ້ອຍດີແລ້ວ ໃຫ້ຢອດເມັດ ລົງໝານ ຕາມໄລຍະປູກດັ່ງກ່າວ ຂຸມລະ 2 ຫາ 3 ເມັດ ເລິກ 2 ຊຕມ. ປົກ ດິນບາງໆ ຫົດນ້ຳໃຫ້ຊຸ່ມເອົາເຟືອງແຫ້ງປົກບາງໆ ເມື່ອຕົ້ນຈະເລີນເຕີບ ໂຕ ຈົນມີໃບແທ້ 2 ໃບ ແລ້ວໃຫ້ຖອນແຍກ ເຫຼືອພຽງຂຸມລະ 1 ຕົ້ນກໍພໍ. ເມື່ອ ຕົ້ນຖົ່ວມີອາຍຸ 15 ມື້ ຕ້ອງເຮັດຄ້າງໃຫ້ເລືອ.



# ການບົວລະບັດຮັກສາ

## ການໃສ່ຝຸ່ນ

ຝຸ່ນທີ່ແນະນຳໃຫ້ໃສ່ ຄືຝຸ່ນ ເຄມີ ສູດ 10_20_10 ຫຼື 15_15_15 ຫຼື 13_13_21 ຫຼື ສູດອື່ນໆ ທີ່ໃກ້ຄຽງກັນນີ້. ໃສ່ຈຳນວນ 300 ຫາ500 ກລ/ຮຕ ຂຶ້ນຢູ່ກັບຄວາມອຸດົມສົມບູນຂອງດິນ. ການໃສ່ຝຸ່ນ ເທື່ອທີ່1: ໃສ່ເປັນຝຸ່ນ ຮອງພື້ນກ່ອນປູກ, ເທື່ອທີ2: ໃສ່ຫຼັງ ຈາກປູກໄດ້ 25 ຫາ 30 ວັນ ໂຮຍຂ້າງ ຫ່າງຈາກຕົ້ນເລັກນ້ອຍ ພວນດິນປົກຫຼັງຈາກປູກ ໂດຍໃສ່ແບບໂຮຍຂ້າງ ຕົ້ນ ກ່ອນແລ້ວພວນດິນປົກ.

## ການໃຫ້ນ້ຳ

ຄວນໃຫ້ສະໝ່ຳສະເໝີ ແລະພຽງພໍ ບໍ່ຄວນໃຫ້ຂາດນ້ຳ ໃນໄລຍະ ກຳລັງອອກດອກ ແລະ ຈັບໝາກ.

## ການພວນດິນ ແລະ ກຳຈັດຫຍ້າ

ຄວນເຮັດເລື້ອຍໆ ໃນໄລຍະທຳອິດ ແລະຕ້ອງເຮັດຢ່າງລະມັດລະ ວັງ ຢ່າໃຫ້ກະທົບກະເທືອນເຖິ່ງລະບົບຮາກ ການຈະເລີນເຕີບໂຕຈະຢຸດສະ ງັກ.